Washington Apple Health

# ອັບເດດລາຍໄດ້ ຫຼື ທີ່ຢູ່ຂອງຂ້າພະເຈົ້າ(ລາຍງານການປ່ຽນແປງ)

ຮຽນຮູ້ກ່ຽວກັບວິທີການລາຍງານການປ່ຽນແປງສຳລັບການຄຸ້ມຄອງ Apple Health (Medicaid) ສຳລັບລາຍໄດ້ລວມຍອດທີ່ແກ້ໄຂໃຫ້ເໝາະສົມ (MAGI) ຫຼື Classic Medicaid.

## ຂ້າພະເຈົ້າຈະລາຍງານການປ່ຽນແປງໃນເມື່ອໃດ?

ບຸກຄົນທີ່ລົງທະບຽນໃນການຄຸ້ມຄອງ Apple Health (Medicaid) ຄວນລາຍງານການປ່ຽນແປງພາຍໃນ 30 ມື້.

## ຂ້າພະເຈົ້າຈຳເປັນຕ້ອງລາຍງານການປ່ຽນແປງປະເພດໃດ?

ໃນລະຫວ່າງສະພາວະສຸກເສີນດ້ານສາທາລະນະສຸກ (PHE) ເນື່ອງຈາກໂຄວິດ-19, ອົງການດູແລສຸຂະພາບ (HCA) ໄດ້ຂະຫຍາຍການຄຸ້ມຄອງສຳລັບລູກຄ້າທຸກຄົນຂອງ Apple Health (Medicaid). ຕອນນີ້, ການຂະຫຍາຍນີ້ກຳລັງຈະສິ້ນສຸດລົງເນື່ອງຈາກກົດໝາຍວ່າດ້ວຍການຈັດສັນເງິນໂດຍສັງລວມ, ສະບັບປີ 2023. **ວິທີການທີ່ດີສຸດທີ່ລູກຄ້າຂອງ Apple Health ຍັງຄົງໄດ້ຮັບຂໍ້ມູນແມ່ນໂດຍການອັບເດດຂໍ້ມູນຕິດຕໍ່ຂອງພວກເຂົາໃຫ້ເປັນຂໍ້ມູນຫຼ້າສຸດ. ສິ່ງນີ້ຈະຮັບປະກັນວ່າພວກເຂົາບໍ່ພາດແຈ້ງການທີ່ສຳຄັນກ່ຽວກັບການຄຸ້ມຄອງຂອງພວກເຂົາ, ລວມເຖິງແຈ້ງການຕໍ່ສັນຍາຂອງພວກເຂົາ.**

ຮຽນຮູ້ການປ່ຽນແປງທີ່ຈຳເປັນຕ້ອງຖືກລາຍງານ **ເພື່ອກະກຽມສຳລັບຕອນທ້າຍຂອງການຄຸ້ມຄອງຢ່າງຕໍ່ເນື່ອງ:**

- Apple Health (ຜູ້ໃຫຍ່ທີ່ເປັນລາຍບຸກຄົນ, ເດັກນ້ອຍ, ບຸກຄົນຖືພາ ແລະ ພໍ່ແມ່/ຜູ້ດູແລ)
- Classic Medicaid ຂອງ Apple Health (ບຸກຄົນທີ່ມີອາຍຸ 65 ປີ ຫຼື ສູງກວ່ານັ້ນ, ມີສະພາວະຕາບອດ ຫຼື ຄວາມພິການ)

## ຂ້າພະເຈົ້າຈະລາຍງານການປ່ຽນແປງສຳລັບການຄຸ້ມຄອງ Apple Health (Medicaid) ໄດ້ແນວໃດ?

### ກວດເບິ່ງວ່າທ່ານເປັນຜູ້ຮັບ Apple Health ຫຼື ບໍ່

ຂ້າພະເຈົ້າຕ້ອງລາຍງານການປ່ຽນແປງສຳລັບ:

- ຜູ້ໃຫຍ່ທີ່ມີອາຍຸ 19 ຫາ 64 ປີ, ທີ່ບໍ່ມີ Medicare.
- ເດັກນ້ອຍ.
- ຄົນທີ່ຖືພາ.
- ພໍ່ແມ່/ຜູ້ດູແລ.

## ຂ້າພະເຈົ້າຕ້ອງລາຍງານການປ່ຽນແປງຫຍັງສຳລັບການຄຸ້ມຄອງ Apple Health?

ໃນລະຫວ່າງການຄຸ້ມຄອງຢ່າງຕໍ່ເນື່ອງ, ລູກຄ້າຂອງ Apple Health ຍັງຈຳເປັນຕ້ອງລາຍງານການປ່ຽນແປງດັ່ງຕໍ່ໄປນີ້:

- ການເພີ່ມ ຫຼື ການຫຼຸດລາຍໄດ້
- ທີ່ຢູ່ອາໄສ
- ທີ່ຢູ່ທາງໄປສະນີ
- ສະຖານະການແຕ່ງດອງ
- ອົງປະກອບໃນຄົວເຮືອນ
- ການຖືພາ
- ການກັກຂັງ
- ການປະກັນອື່ນໆ ຫຼື ການຄຸ້ມຄອງທີ່ເກີດຈາກພັນທະຮັບຜິດຊອບຂອງພາກສ່ວນທີສາມ (TPL), ລວມເຖິງເງື່ອນໄຂສິດ Medicare
- ສະຖານະຄົນເຂົ້າເມືອງ ຫຼື ພົນລະເມືອງ
- **ການລົງທະບຽນໃນໂຄງການຮັກສາຄວາມລັບຂອງທີ່ຢູ່ (ACP)**

Washington State Health Care Authority
ອົງການດູແລສຸຂະພາບກຳກັບ Washington Apple Health (Medicaid)

## ຕົວເລືອກເພື່ອລາຍງານການປ່ຽນແປງສຳລັບການຄຸ້ມຄອງ Apple Health

ທ່ານມີຫຼາຍຕົວເລືອກເພື່ອລາຍງານການປ່ຽນແປງສຳລັບການຄຸ້ມຄອງ Apple Health:

- ອອນລາຍ: ໄປທີ່ **Washington Healthplanfinder** -ລົງຊື່ເຂົ້າສູ່ລະບົບ ແລະ ເລືອກ "ລາຍງານການປ່ຽນແປງໃນລາຍໄດ້ ຫຼື ຄົວເຮືອນ" ຢູ່ກ້ອງລິ້ງດ່ວນ.
- ໂທລະສັບ: ໂທຫາສູນຊ່ວຍເຫຼືອລູກຄ້າຂອງ Washington Healthplanfinder ທີ່ 1-855-923-4633.
- ອີເມວ: **askmagi@hca.wa.gov**
- ເຈ້ຍ: ສົ່ງຢືນຢັນການປ່ຽນແປງໄປທີ່: HCA-MEDS, PO Box 45531, Olympia WA 98504

ຫຼັງຈາກທີ່ໄດ້ປະມວນຜົນການປ່ຽນແປງຂອງທ່ານ, ທ່ານຈະໄດ້ຮັບການແຈ້ງເຕືອນທີ່ອະທິບາຍການປ່ຽນແປງໃດໜຶ່ງຕໍ່ການຄຸ້ມຄອງຂອງທ່ານ ຫຼື ຂັ້ນຕອນຖັດໄປ.

## ຂ້າພະເຈົ້າຈະລາຍງານການປ່ຽນແປງສຳລັບການຄຸ້ມຄອງ Apple Health Classic Medicaid ໄດ້ແນວໃດ?

### ກວດເບິ່ງວ່າທ່ານເປັນຜູ້ຮັບ Classic Medicaid ຂອງ Apple Health ຫຼື ບໍ່

ຂ້າພະເຈົ້າຈຳເປັນຕ້ອງລາຍງານການປ່ຽນແປງສຳລັບ:

- ຜູ້ໃຫຍ່ທີ່ມີອາຍຸ 65 ຫຼື ສູງກວ່ານັ້ນ.
- ຄົນທີ່ຕາບອດ ຫຼື ພິການ.
- ຄົນກຳລັງໄດ້ຮັບການບໍລິການ ແລະ ການຊ່ວຍເຫຼືອໄລຍະຍາວ.

## ຂ້າພະເຈົ້າຈຳເປັນຕ້ອງລາຍງານການປ່ຽນແປງຫຍັງສຳລັບການຄຸ້ມຄອງ Classic Medicaid ຂອງ Apple Health?

ໃນລະຫວ່າງທີ່ດຳເນີນການຕໍ່, ລູກຄ້າ Classic Medicaid ຂອງ Apple Health ຍັງຈຳເປັນຕ້ອງລາຍງານການປ່ຽນແປງດັ່ງຕໍ່ໄປນີ້:

- ການເພີ່ມ ຫຼື ການຫຼຸດລາຍໄດ້
- ທີ່ຢູ່ອາໄສ
- ທີ່ຢູ່ທາງໄປສະນີ
- ການຖືພາ
- ສະຖານະຄົນເຂົ້າເມືອງ ຫຼື ພົນລະເມືອງ
- **ການລົງທະບຽນໃນໂຄງການຮັກສາຄວາມລັບຂອງທີ່ຢູ່ (ACP)**

## ຕົວເລືອກເພື່ອລາຍງານການປ່ຽນແປງສຳລັບການຄຸ້ມຄອງ Classic Medicaid ຂອງ Apple Health

ທ່ານມີຫຼາຍຕົວເລືອກເພື່ອລາຍງານການປ່ຽນແປງສຳລັບການຄຸ້ມຄອງ Classic Medicaid ຂອງ Apple Health:

- **ອອນລາຍ:** ໄປທີ່ **Washington Connection** - ເລືອກ "ລາຍງານການປ່ຽນແປງ" ແລະ ປະຕິບັດຕາມຄຳສັ່ງ.
- **ໂທລະສັບ:** ໂທຫາສູນບໍລິການລູກຄ້າ DSHS ທີ່ 1-877-501-2233.
- **ເຈ້ຍ:** ສົ່ງຢືນຢັນການປ່ຽນແປງໄປທີ່: DSHS-CSD, PO Box 11699, Tacoma, WA 98411-6699.

ຫຼັງຈາກທີ່ໄດ້ປະມວນຜົນການປ່ຽນແປງຂອງທ່ານ, ທ່ານຈະໄດ້ຮັບການແຈ້ງເຕືອນທີ່ອະທິບາຍການປ່ຽນແປງໃດໜຶ່ງຕໍ່ການຄຸ້ມຄອງຂອງທ່ານ ຫຼື ຂັ້ນຕອນຖັດໄປ.

## ລິ້ງກ່ຽວຂ້ອງ

- **ຕ້ອງລາຍງານການປ່ຽນແປງໃນເມື່ອໃດ**
- **ການປ່ຽນແປງທີ່ຕ້ອງລາຍງານ**
- **ໂຄງການຮັກສາຄວາມລັບຂອງທີ່ຢູ່**